# ກົດໝາຍຮ່ວມຂອງຣັຖມິນນີໂຊຕາແລະຣັຖບານກາງວ່າດ້ວຍ
# ສິດທິດ້ານການເບິ່ງແຍງລະຍະສຸດທ້າຍ

## ກົດໝາຍຂອງຣັຖມິນນີໂຊຕາວ່າດ້ວຍສິດທິດ້ານການເບິ່ງແຍງລະຍະສຸດທ້າຍ
## ຕາມຣັຖບັນຍັດຣັຖມິນນີໂຊຕາ, ມາດຕາທີ 144A.751

ພາສາໃນຕົວພິມ**ສີເຂັ້ມ**ສະແດງເຖິງສິດທິເພີ່ມເຕີມຂອງຜູ້ບໍລິໂພກພາຍໃຕ້ກົດໝາຍຂອງຣັຖບານກາງສໍາລັບຄົນເຈັບຂອງສະຖານເບິ່ງແຍງລະຍະສຸດທ້າຍທີ່ໄດ້ຮັບການຮັບຮອງຈາກ Medicare.

ຂໍ້ຍ່ອຍທີ 1. ຖະແຫຼງການວ່າດ້ວຍສິດທິ. ບຸກຄົນທີ່ຮັບການເບິ່ງແຍງດູແລລະຍະສຸດທ້າຍມີສິດທີ່ຈະ:

**ໄດ້ຮັບການບອກກ່າວເຖິງສິດທິຂອງເຂົາ ຫຼື ຂອງລາວ, ແລະສະຖານເບິ່ງແຍງລະຍະສຸດທ້າຍຕ້ອງປົກປ້ອງ ແລະສົ່ງເສີມການນໍາໃຊ້ສິດທິເຫຼົ່ານີ້.**

(1) **ນໍາໃຊ້ສິດທິຂອງເຂົາ ຫຼື ຂອງລາວໃນຖານະຄົນເຈັບຂອງສະຖານເບິ່ງແຍງລະຍະສຸດທ້າຍ.** ໄດ້ຮັບຂໍ້ມູນເປັນລາຍລັກອັກສອນກ່ຽວກັບສິດທິລ່ວງໜ້າກ່ອນທີ່ຈະໄດ້ຮັບການເບິ່ງແຍງດູແລໃນລະຍະສຸດທ້າຍ ຫຼື ໃນລະຫວ່າງການປະເມີນຜົນຄັ້ງທໍາອິດກ່ອນທີ່ຈະເລີ້ມຮັບການເບິ່ງແຍງລະຍະສຸດທ້າຍ, ລວມເຖິງ ສິ່ງທີ່ຄວນເຮັດຖ້າຫາກຖືກລະເມີດສິດທິ.

**ແຈ້ງການເລື້ອງສິດທິແລະຄວາມຮັບຜິດຊອບ: (1) ໃນລະຫວ່າງການກວດປະເມີນຜົນຄັ້ງທໍາອິດລ່ວງໜ້າກ່ອນໃຫ້ບໍລິການທາງສະຖານເບິ່ງແຍງລະຍະສຸດທ້າຍຕ້ອງຈັດຫາແຈ້ງການທັງດ້ວຍວາຈາ (ໝາຍເຖິງ ຄໍາເວົ້າ) ແລະເປັນລາຍລັກອັກສອນແກ່ຄົນເຈັບ ຫຼື ຕົວແທນ ກ່ຽວກັບສິດທິຂອງຄົນເຈັບ ແລະຄວາມຮັບຜິດຊອບໃນພາສາແລະລັກສະນະທີ່ຄົນເຈັບເຂົ້າໃຈ; (2) ສະຖານເບິ່ງແຍງຄົນເຈັບລະຍະສຸດທ້າຍຕ້ອງປະຕິບັດຕາມຂໍ້ກໍານົດຂອງພາກສ່ວນຍ່ອຍ I ຂອງຫຼັກກົດລະບຽບຂອງຣັຖບານກາງ (CFR) 489 ຂອງບົດນີ້ກ່ຽວກັບໜັງສືຄໍາສັ່ງລ່ວງໜ້າ. ສະຖານເບິ່ງແຍງລະຍະສຸດທ້າຍຕ້ອງແຈ້ງບອກ ແລະແຈກຢາຍເອກະສານຂໍ້ມູນໃຫ້ແກ່ຄົນເຈັບກ່ຽວກັບນະໂຍບາຍຕ່າງໆໃນເລື້ອງໜັງສືຄໍາສັ່ງລ່ວງໜ້າ, ລວມເຖິງ ລາຍລະອຽດຂອງກົດໝາຍຣັຖທີ່ກ່ຽວຂ້ອງ; (3) ສະຖານເບິ່ງແຍງລະຍະສຸດທ້າຍຕ້ອງຂໍເອົາລາຍເຊັນຂອງຄົນເຈັບ ຫຼື ຂອງຕົວແທນຊຶ່ງເປັນການຢັ້ງຢືນວ່າ ເຂົາ ຫຼື ລາວໄດ້ຮັບສໍາເນົາຂອງແຈ້ງການເລື້ອງສິດທິແລະຄວາມຮັບຜິດຊອບ.**

(2) ໄດ້ຮັບການເບິ່ງແຍງ ແລະການບໍລິການທີ່ສອດຄ່ອງກັບແຜນການເບິ່ງແຍງດູແລລະຍະສຸດທ້າຍທີ່ເໝາະສົມ ແລະຢູ່ພາຍໃຕ້ມາດຕະຖານການເບິ່ງແຍງລະຍະສຸດທ້າຍທີ່ຍອມຮັບໄດ້ ແລະ ມີສ່ວນຮ່ວມຢ່າງກະຕືລືລົ້ນໃນການສ້າງ ແລະປັບປຸງແຜນແລະປະເມີນຜົນການເບິ່ງແຍງແລະການບໍລິການຕ່າງໆ. **ປະກອບສ່ວນເຂົ້າໃນການພັດທະນາປັບປຸງແຜນການເບິ່ງແຍງລະຍະສຸດທ້າຍຂອງເຂົາ ຫຼື ລາວ.**

(3) ໄດ້ຮັບການບອກກ່າວລ່ວງໜ້າກ່ອນຮັບການເບິ່ງແຍງກ່ຽວກັບການບໍລິການຕ່າງໆ ທີ່ຈະຖືກຈັດຫາໃຫ້, ລະບຽບວິໄນຊຶ່ງຈະນຳໃຊ້ໃນການເບິ່ງແຍງ, ຄວາມຖີ່ໃນການຢ້ຽມຢາມທີ່ສະເໜີໃຫ້, ທາງເລືອກອື່ນໆ ທີ່ມີໃຫ້ ແລະຜົນຕາມມາຂອງທາງເລືອກເຫຼົ່ານີ້, ລວມເຖິງຜົນຕາມມາຂອງການປະຕິເສດການບໍລິການເຫຼົ່ານີ້.

(4) ໄດ້ຮັບການບອກກ່າວລ່ວງໜ້າ, ເມື່ອເປັນໄປໄດ້, ເຖິງການປ່ຽນແປງໃດໆ ໃນແຜນການເບິ່ງແຍງລະຍະສຸດທ້າຍ ແລະປະກອບສ່ວນຢ່າງກະຕືລືລົ້ນໃນທຸກການປ່ຽນແປງໃດໆ.

(5) ປະຕິເສດການ**ເບິ່ງແຍງດູແລ**, ການບໍລິການ ຫຼື ການປິ່ນປົວ.

(6) ຮູ້ລ່ວງໜ້າເຖິງຂໍ້ຈຳກັດການບໍລິການໃດໆ ທີ່ມີໃຫ້ຈາກຜູ້ໃຫ້ບໍລິການ, ແລະເຫດຜົນຂອງຜູ້ໃຫ້ບໍລິການ ສຳລັບການຍຸດຕິການບໍລິການ. **ຮັບເອົາຂໍ້ມູນກ່ຽວກັບຂົງເຂດຂອງການບໍລິການຊຶ່ງທາງສະຖານເບິ່ງແຍງ ລະຍະສຸດທ້າຍຈະຈັດຫາໃຫ້ ແລະຂໍ້ຈຳກັດສະເພາະຂອງການບໍລິການເຫຼົ່ານັ້ນ.**

(7) ຮູ້ລ່ວງໜ້າກ່ອນຮັບການເບິ່ງແຍງດູແລບໍ່ວ່າການບໍລິການເບິ່ງແຍງລະຍະສຸດທ້າຍຈະຢູ່ພາຍໃຕ້ການຄຸ້ມຄອງ ຂອງປະກັນພັຍສຸຂະພາບ, ການຊ່ວຍເຫຼືອທາງການແພດ, Medicare, ຫຼືໂຄງການສຸຂະພາບອື່ນໆ ທີ່ບຸກຄົນລົງທະບຽນເຂົ້າ ຫຼືບໍ່ກໍຕາມ. **ໄດ້ຮັບຂໍ້ມູນກ່ຽວກັບການບໍລິການຕ່າງໆ ທີ່ຢູ່ພາຍໃຕ້ຜົນປະໂຫຍດ ການຊ່ວຍເຫຼືອຂອງສະຖານເບິ່ງແຍງລະຍະສຸດທ້າຍ.**

(8) ໄດ້ຮັບຈຳນວນເງິນຊົດໃຊ້ຄືນທີ່ປະເມີນໄວ້ຢ່າງສຸດຈະລິດໃຈ ຊຶ່ງຜູ້ໃຫ້ບໍລິການຄາດໝາຍທີ່ຈະໄດ້ຮັບຈາກ ບໍລິສັດປະກັນພັຍສຸຂະພາບທີ່ບຸກຄົນຂຶ້ນທະບຽນນຳ ຖ້າຫາກ ມີການຮ້ອງຂໍ. ນອກຈາກນີ້ ຍັງຕ້ອງແຈ້ງບອກ ຈຳນວນເງິນທີ່ ປະເມີນໄວ້ແກ່ບຸກຄົນທີ່ຮ້ອງຂໍ ຊຶ່ງເປັນຜູ້ທີ່ບໍ່ໄດ້ຂຶ້ນທະບຽນໃນບໍລິສັດປະກັນພັຍ. ຂໍ້ມູນການຈ່າຍເງິນນີ້ ບໍ່ຖືເປັນການ ຜູກມັດທາງກົດໝາຍໃນການປະເມີນຈຳນວນຄ່າບໍລິການຕ່າງໆ.

(9) ຮູ້ວ່າ ອາດມີການບໍລິການອື່ນໆ ມີໃຫ້ໃນຊຸມຊົນ, ລວມເຖິງ ການບໍລິການເມື່ອເສັ້ງຊີວິດ ແລະຜູ້ໃຫ້ບໍລິການ ເບິ່ງແຍງຄົນເຈັບໃນລະຍະສຸດທ້າຍອື່ນໆ, ແລະຮູ້ວ່າຕ້ອງໄປບ່ອນໃດເພື່ອຂໍເອົາຂໍ້ມູນກ່ຽວກັບການບໍລິການເຫຼົ່ານີ້.

(10) ເລືອກຜູ້ໃຫ້ບໍລິການທີ່ມີໃຫ້ຢ່າງເປັນອິດສະຫຼະ ແລະປ່ຽນຜູ້ໃຫ້ບໍລິການໄດ້ຫຼັງຈາກຮັບບໍລິການໄປແລ້ວ, ພາຍໃຕ້ຂໍ້ຈຳກັດຂອງປະກັນພັຍສຸຂະພາບ, ການຊ່ວຍເຫຼືອທາງການແພດ, Medicare, ຫຼື ໂຄງການສຸຂະພາບອື່ນໆ. **ເລືອກແພດໝໍຜູ້ປິ່ນປົວຂອງເຂົາ ຫຼື ຂອງລາວໄດ້ເອງ.**

(11) ມີການຮັກສາຂໍ້ມູນສ່ວນຕົວ, ຂໍ້ມູນການເງິນ, ແລະຂໍ້ມູນການປິ່ນປົວໄວ້ເປັນຄວາມລັບ ແລະໄດ້ຮັບການແນະນຳ ໃຫ້ຮູ້ເຖິງນະໂຍບາຍ ແລະລະບຽບການຂອງຜູ້ໃຫ້ບໍລິການໃນດ້ານການເປີດເຜີຍຂໍ້ມູນດັ່ງກ່າວ.

(12) ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງບັນທຶກຕ່າງໆ ແລະເອກະສານຂໍ້ມູນຈາກບັນທຶກຕ່າງໆ ໂດຍສອດຄ່ອງຕາມມາດຕາທີ 144.291 ຫາ 144.298. **ມີບັນທຶກດ້ານການແພດທີ່ເກັບເປັນຄວາມລັບ. ການເຂົ້າເຖິງ ຫຼື ການເປີດເຜີຍຂໍ້ມູນ ຂອງຄົນເຈັບ ແລະປະຫວັດການປິ່ນປົວແມ່ນອະນຸຍາດໃຫ້ໂດຍສອດຄ່ອງກັບ 45 CFR ສ່ວນທີ 160 ແລະ 164.**

(13) ໄດ້ຮັບການບໍລິການຈາກບຸກຄົນທີ່ໄດ້ຮັບການຝຶກຫັດມາຢ່າງເໝາະສົມ ແລະມີຄວາມສາມາດທີ່ຈະປະຕິບັດໜ້າທີ່ຂອງຕົນ.

(14) ໄດ້ຮັບການປະຕິບັດຕອບດ້ວຍຄວາມເອື້ອເຟື້ອແລະຄວາມເຄົາລົບ ແລະມີການປະຕິບັດຕໍ່ຊັບສິນຂອງຄົນເຈັບດ້ວຍຄວາມເຄົາລົບ. ໄດ້ຮັບການປະຕິບັດຕໍ່ຊັບສິນຂອງເຂົາ ຫຼື ຂອງລາວ ແລະປະຕິບັດຕໍ່ບຸກຄົນດ້ວຍຄວາມເຄົາລົບ.

(15) ສະແດງຄຳຮ້ອງທຸກເລື້ອງການປິ່ນປົວ ຫຼື ການເບິ່ງແຍງດູແລຊຶ່ງຖືກຈັດຫາໃຫ້, ຫຼື ບົກຜ່ອງໃນການປະຕິບັດ ຫຼື ຂາດຄວາມເອື້ອເຟື້ອ ຫຼື ຂາດຄວາມເຄົາລົບຕໍ່ຄົນເຈັບ ຫຼື ຊັບສິນຂອງຄົນເຈັບ **ໂດຍບຸກຄົນທີ່ເປັນຜູ້ໃຫ້ການບໍລິການໃນນາມຂອງສະຖານເບິ່ງແຍງລະຍະສຸດທ້າຍ.**

**ຄົນເຈັບມີສິດທີ່ຈະບໍ່ຖືກຈຳແນກຕໍ່ຕ້ານ ຫຼື ຖືກແກ້ແຄ້ນອັນເນື່ອງມາຈາກການນຳໃຊ້ສິດທິຂອງເຂົາ ຫຼື ຂອງລາວ.**

(16) ເປັນອິດສະຫຼະຈາກການຖືກຂົ່ມເຫັງທາງກາຍ ແລະທາງວາຈາ. **ເປັນອິດສະຫຼະຈາກການປະຕິບັດທີ່ບໍ່ດີ, ການປະລະ, ຫຼື ການຂົ່ມເຫັງທາງວາຈາ, ຈິດໃຈ, ທາງເພດ, ແລະທາງຮ່າງກາຍ, ລວມເຖິງ ການບາດເຈັບຕ່າງໆທີ່ບໍ່ຮູ້ສາເຫດ, ແລະການປະຕິບັດທີ່ບໍ່ເໝາະສົມຕໍ່ຊັບສິນຂອງຄົນເຈັບ.**

(17) ແຈ້ງການລ່ວງໜ້າທີ່ສົມເຫດຜົນກ່ຽວກັບການປ່ຽນແປງຕ່າງໆ ໃນດ້ານການບໍລິການ ຫຼື ການເກັບຄ່າຕ່າງໆ, ລວມເຖິງ ແຈ້ງການຢ່າງໜ້ອຍສິບວັນທີ່ບອກເຖິງການຍຸດຕິການບໍລິການຈາກຜູ້ໃຫ້ບໍລິການ, ຍົກເວັ້ນໃນກໍລະນີທີ່:
(i) ຜູ້ຮັບບໍລິການມີສ່ວນກ່ຽວຂ້ອງໃນການກະທຳທີ່ປ່ຽນແປງສະພາບການຂອງການເຮັດວຽກລະຫວ່າງສະຖານເບິ່ງແຍງລະຍະສຸດທ້າຍກັບບຸກຄົນທີ່ເປັນຜູ້ໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍ, ຫຼື ສ້າງສະພາບແວດລ້ອມໃນການເຮັດວຽກທີ່ບໍ່ປອດພັຍ ຫຼື ເປັນການຂົ່ມເຫັງຕໍ່ບຸກຄົນທີ່ໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍ;
(ii) ເຫດສຸກເສີນສຳລັບຜູ້ໃຫ້ການເບິ່ງແຍງທີ່ບໍ່ເປັນທາງການ ຫຼື ການປ່ຽນແປງທີ່ສຳຄັນໃນສະພາບການຂອງຜູ້ຮັບບໍລິການໄດ້ສົ່ງຜົນກະທົບຕໍ່ຄວາມຕ້ອງການດ້ານການບໍລິການຊຶ່ງເກີນຈາກຂໍ້ຕົກລົງຂອງຜູ້ໃຫ້ບໍລິການໃນປັດຈຸບັນ ແລະສະຖານເບິ່ງແຍງລະຍະສຸດທ້າຍເຫັນວ່າບໍ່ສາມາດຕອບສະໜອງໄດ້ຢ່າງປອດພັຍ; ຫຼື
(iii) ຜູ້ຮັບບໍລິການບໍ່ໄດ້ຖືກຮັບຮອງວ່າເຈັບປ່ວຍໜັກອີກຕໍ່ໄປ.

(18) ການສົ່ງຕໍ່ທີ່ມີການປະສານງານກັນໃນກໍລະນີທີ່ມີການປ່ຽນແປງໃນສ່ວນຂອງຜູ້ໃຫ້ບໍລິການ.

(19) ຮູ້ວິທີຕິດຕໍ່ກັບບຸກຄົນທີ່ກ່ຽວຂ້ອງກັບຜູ້ໃຫ້ບໍລິການທີ່ເປັນຜູ້ຮັບຜິດຊອບໃນການຈັດການບັນຫາຕ່າງໆ ແລະໃຫ້ມີການສືບສວນຜູ້ໃຫ້ບໍລິການ ແລະພະຍາຍາມແກ້ໄຂຂໍ້ຮ້ອງຮຽນ ຫຼື ຄຳຮ້ອງທຸກ.

(20) ຮູ້ຈັກຊື່ ແລະທີ່ຢູ່ຂອງອົງການຂອງຣັຖ ຫຼື ຂອງຄາວຕີ້ ສຳລັບການຕິດຕໍ່ເພື່ອຂໍຂໍ້ມູນຕື່ມ ຫຼື ຂໍການຊ່ວຍເຫຼືອ.

(21) ຢັ້ງຢືນສິດທິເຫຼົ່ານີ້ໂດຍສ່ວນຕົວ, ຫຼື ໃຫ້ມີການຢັ້ງຢືນສິດເຫຼົ່ານີ້ໂດຍຄອບຄົວຂອງຄົນເຈັບລະຍະສຸດທ້າຍເມື່ອຄົນເຈັບໄດ້ຖືກຕັດສິນວ່າຂາດຄວາມສາມາດ, ໂດຍບໍ່ມີການໂຕ້ຕອບແກ້ແຄ້ນ.
**ຖ້າຫາກຄົນເຈັບໄດ້ຖືກຕັດສິນວ່າຂາດຄວາມ ສາມາດພາຍໃຕ້ກົດໝາຍຂອງຣັຖຊຶ່ງຕັດສິນໂດຍສານຍຸດຕິທັມ,**

ສິດທິຂອງຄົນເຈັບຈະຖືກນໍາໃຊ້ໂດຍບຸກຄົນທີ່ໄດ້ຮັບການ ແຕ່ງຕັ້ງໂດຍສອດຄ່ອງກັບກົດໝາຍຂອງຣັຖ ເພື່ອກະທໍາການໃນນາມຂອງຄົນເຈັບ. ຖ້າຫາກ ສານຂອງຣັຖບໍ່ໄດ້ຕັດສິນວ່າຄົນເຈັບຂາດຄວາມສາມາດ, ຕົວແທນທາງກົດໝາຍໃດໆ ທີ່ໄດ້ຮັບມອບໝາຍຈາກຄົນເຈັບຊຶ່ງສອດຄ່ອງກັບກົດໝາຍຂອງຣັຖ ກໍສາມາດນໍາໃຊ້ສິດທິຂອງຄົນເຈັບໄດ້ໃນຂອບເຂດທີ່ກົດໝາຍຂອງຣັຖອະນຸຍາດໃຫ້,

(22) ໃຫ້ມີການຈັດການດູແລຄວາມເຈັບປວດແລະອາການຕາມລະດັບຄວາມສະບາຍທີ່ຄົນເຈັບຕ້ອງການ. ໄດ້ຮັບການຈັດການດູແລຄວາມປວດຢ່າງມີປະສິດທິພາບ ແລະມີການຄວບຄຸມອາການເຈັບເປັນຈາກສະຖານເບິ່ງແຍງລະຍະສຸດທ້າຍ ສໍາລັບສະພາບອາການທີ່ກ່ຽວຂ້ອງກັບຄວາມເຈັບປ່ວຍໃນລະຍະສຸດທ້າຍ;

ສະຖານເບິ່ງແຍງລະຍະສຸດທ້າຍຕ້ອງ:
**(i)** ຮັບປະກັນວ່າ ການລະເມີດທີ່ຖືກກ່າວຫາທັງໝົດທີ່ກ່ຽວພັນກັບການປະຕິບັດທີ່ບໍ່ດີ, ການປະລະ, ຫຼື ການຂົ່ມເຫັງທາງວາຈາ, ທາງຈິດໃຈ, ທາງເພດ, ແລະທາງຮ່າງກາຍ, ລວມເຖິງ ການບາດເຈັບໂດຍທີ່ບໍ່ຮູ້ສາເຫດ, ແລະການປະຕິບັດທີ່ບໍ່ເໝາະສົມຕໍ່ຊັບສິນຂອງຄົນເຈັບໂດຍບຸກຄົນທີ່ໃຫ້ບໍລິການດູແລໃນນາມຂອງສະຖານເບິ່ງແຍງລະຍະສຸດທ້າຍ, ຕ້ອງຖືກລາຍງານທັນທີໂດຍເຈົ້າໜ້າທີ່ຂອງສະຖານເບິ່ງແຍງລະຍະສຸດທ້າຍ ແລະເຈົ້າໜ້າທີ່ທີ່ເຮັດວຽກຕາມສັນຍາ ໂດຍລາຍງານຕໍ່ຜູ້ບໍລິຫານຂອງສະຖານເບິ່ງແຍງລະຍະສຸດທ້າຍ **(ii)** ສືບສວນທັນທີຕໍ່ການລະເມີດທີ່ຖືກກ່າວຫາທັງໝົດທີ່ກ່ຽວຂ້ອງກັບບຸກຄົນໃດໆ ທີ່ໃຫ້ບໍລິການໃນນາມຂອງສະຖານເບິ່ງແຍງລະຍະສຸດທ້າຍ ແລະດໍາເນີນການທັນທີເພື່ອປ້ອງກັນການລະເມີດທີ່ອາດເປັນໄປໄດ້ຕໍ່ໄປອີກ ໃນຂະນະທີ່ການລະເມີດທີ່ຖືກກ່າວຫານັ້ນຕ້ອງໄດ້ຮັບການກວດສອບ. ການສືບສວນ ແລະ/ຫຼື ການເຮັດເອກະສານກ່ຽວກັບການລະເມີດທີ່ຖືກກ່າວຫາທັງໝົດນັ້ນຕ້ອງດໍາເນີນການໂດຍເປັນໄປຕາມກົດລະບຽບທີ່ວາງໄວ້;
**(iii)** ດໍາເນີນການແກ້ໄຂຢ່າງເໝາະສົມໂດຍສອດຄ່ອງກັບກົດໝາຍຂອງຣັຖ ຖ້າຫາກ ການລະເມີດທີ່ຖືກກ່າວຫານັ້ນໄດ້ຮັບການຢັ້ງຢືນຄວາມຖືກຕ້ອງໂດຍຝ່າຍບໍລິຫານຂອງສະຖານເບິ່ງແຍງລະຍະສຸດທ້າຍ ຫຼື ໂດຍອົງການພາຍນອກທີ່ມີການພິຈາລະນາຕັດສິນ, ເຊັ່ນ ອົງການສໍາຫຼວດຂອງຣັຖ ຫຼື ໜ່ວຍງານບັງຄັບໃຊ້ກົດໝາຍຂອງທ້ອງຖິ່ນ; ແລະ
**(iv)** ຮັບປະກັນວ່າ ການລະເມີດທີ່ມີການຢັ້ງຢືນຄວາມຖືກຕ້ອງນັ້ນໄດ້ຖືກລາຍງານຕໍ່ໜ່ວຍງານຂອງຣັຖ ແລະໜ່ວຍງານໃນທ້ອງຖິ່ນທີ່ມີອໍານາດຕັດສິນ (ລວມເຖິງ ອົງການສໍາຫຼວດຂອງຣັຖ ແລະອົງການຮັບຮອງຄວາມຖືກຕ້ອງ) ພາຍໃນ 5 ວັນເຮັດວຽກນັບແຕ່ຮັບຮູ້ວ່າມີການລະເມີດ.

ຖ້າຫາກ ຜູ້ໃຫ້ບໍລິການເບິ່ງແຍງຄົນເຈັບລະຍະສຸດທ້າຍດໍາເນີນການມີສະຖານທີ່ພັກສໍາລັບຄົນເຈັບລະຍະສຸດທ້າຍ, ຕ້ອງໃຫ້ໜັງສືແຈ້ງການແກ່ຄົນເຈັບທີ່ອາໄສຢູ່ໃນສະຖານເບິ່ງແຍງລະຍະສຸດທ້າຍແຕ່ລະຄົນຊຶ່ງລວມມີຂໍ້ມູນກ່ຽວກັບ ເລກ ແລະຄຸນສົມບັດຂອງເຈົ້າໜ້າທີ່, ລວມເຖິງ ທັງພະນັກງານ ແລະອາສາສະໝັກ, ລູກຈ້າງ ເພື່ອໃຫ້ເປັນໄປຕາມຂໍ້ກໍານົດຂອງ ກົດລະບຽບຣັຖມິນນີໂຊຕາ 4664.0390 ທີ່ເຮັດວຽກໃນແຕ່ລະເວລາທີ່ສະຖານເບິ່ງແຍງລະຍະສຸດທ້າຍ.

**ຖ້າຫາກ ທ່ານມີຄຳຮ້ອງທຸກກ່ຽວກັບອົງການ ຫຼື ບຸກຄົນທີ່ໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍແກ່ທ່ານ, ທ່ານສາມາດໂທຣ, ຂຽນ, ຫຼື ໄປທີ່ຫ້ອງການດູແລເລື້ອງຮ້ອງທຸກດ້ານສະຖານດູແລສຸຂະພາບ, ກະຊວງສາທາລະນະສຸກຣັຖມິນນີໂຊຕາ. ທ່ານຍັງສາມາດຕິດຕໍ່ສູນດູແລເລື້ອງຮ້ອງທຸກດ້ານການເບິ່ງແຍງດູແລລະຍະຍາວໄດ້.**

**Office of Health Facility Complaints**
**(ຫ້ອງການດູແລເລື້ອງຮ້ອງທຸກດ້ານສະຖານດູແລສຸຂະພາບ)**
(651) 201-4201
1-800-369-7994
ແຟກຊ໌: (651) 281-9796
**ທີ່ຢູ່ທາງໄປສະນີ:**
Minnesota Department of Health Office of Health Facility Complaints P.O. Box 64970
St. Paul, Minnesota 55164-0970
TDD/TTY: 651-215-8980
**ທີ່ຢູ່ຫ້ອງການ:**
Minnesota Department of Health
Office of Health Facility Complaints
85 East Seventh Place
St. Paul, Minnesota 55164-0970

**Ombudsman for Long-Term Care**
**(ສູນດູແລເລື້ອງຮ້ອງທຸກດ້ານການເບິ່ງແຍງລະຍະຍາວ)**
(651) 431-2555
1-800-657-3591
ແຟກຊ໌: (651) 431-7452
**ທີ່ຢູ່ທາງໄປສະນີ:**
Ombudsman for Long-Term Care
PO Box 64971
St. Paul, MN 55164-0971

**ຊື່ຜູ້ໄດ້ຮັບອະນຸຍາດ:** ______________________________________________

**ໂທຣະສັບ:** ____________________ **ອີເມວ:** ____________________________

**ທີ່ຢູ່:** ______________________________________________________

**ຊື່/ຕຳແໜ່ງຂອງບຸກຄົນທີ່ຮັບເລື້ອງບັນຫາ ຫຼື ຄຳຮ້ອງທຸກ:**

______________________________________________________________

ເພື່ອຈຸດປະສົງໃນດ້ານຂໍ້ມູນເທົ່ານັ້ນ ແລະບໍ່ຈຳເປັນຕ້ອງມີຢູ່ໃນຂໍ້ຄວາມກ່ຽວກັບກົດໝາຍວ່າດ້ວຍສິດທິສຳລັບການເບິ່ງແຍງດູແລລະຍະສຸດທ້າຍ: ຣັຖບັນຍັດມິນນີໂຊຕາ, ມາດຕາ 144A.751

ຂໍ້ຍ່ອຍທີ 2. **ການຕີຄວາມ ແລະການບັງຄັບໃຊ້ສິດທິ.** ສິດທິຕ່າງໆ ພາຍໃຕ້ພາກສ່ວນນີ້ແມ່ນຈັດຕັ້ງໄວ້ເພື່ອຜົນປະໂຫຍດຂອງບຸກຄົນທີ່ຮັບການເບິ່ງແຍງໃນລະຍະສຸດທ້າຍ. ຜູ້ໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍບໍ່ສາມາດຮຽກຮ້ອງໃຫ້ບຸກຄົນສະຫຼະສິດທິເຫຼົ່ານີ້ໂດຍໃຊ້ເປັນເງື່ອນໄຂໃນການຮັບການ ເບິ່ງແຍງລະຍະສຸດທ້າຍ. ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ ຫຼື, ໃນກໍລະນີທີ່ບໍ່ມີຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ, ບຸກຄົນທີ່ໄດ້ຮັບການ ແຕ່ງຕັ້ງ, ສາມາດຊອກຫາການບັງຄັບໃຊ້ສິດທິເຫຼົ່ານີ້ໄດ້. ຖະແຫຼງການວ່າດ້ວຍສິດທິນີ້ບໍ່ແທນທີ່ ຫຼື ລົບລ້າງສິດທິອື່ນໆ ແລະສິດທິຂັ້ນພື້ນຖານຕ່າງໆ ທີ່ອາດປາກົດຢູ່ຊຶ່ງກ່ຽວຂ້ອງກັບບຸກຄົນທີ່ຮັບເອົາການເບິ່ງແຍງໃນລະຍະສຸດທ້າຍ, ບຸກຄົນທີ່ໃຫ້ການເບິ່ງແຍງລະຍະສຸດທ້າຍ, ຫຼື ຜູ້ໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍທີ່ມີໃບອະນຸຍາດພາຍໃຕ້ພາກທີ 144A.753.

ຂໍ້ຍ່ອຍທີ 3. **ການເປີດເຜີຍຂໍ້ມູນ.** ສຳເນົາຂອງສິດທິເຫຼົ່ານີ້ຕ້ອງຈັດຫາໃຫ້ແກ່ບຸກຄົນໃນເວລາທີ່ເລີ້ມໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍແກ່ບຸກຄົນດັ່ງກ່າວ. ສຳເນົາຄວນລວມມີທີ່ຢູ່ ແລະເບີໂທຣະສັບຂອງຫ້ອງການດູແລເລື້ອງຮ້ອງທຸກດ້ານສະຖານດູແລສຸຂະພາບ ແລະຫ້ອງການຂອງສູນດູແລເລື້ອງຮ້ອງທຸກດ້ານການເບິ່ງແຍງລະຍະຍາວ ແລະ ຖະແຫຼງການຫຍໍ້ທີ່ອະທິບາຍວິທີຍື່ນຄຳຮ້ອງທຸກຕໍ່ຫ້ອງການເຫຼົ່ານີ້. ຂໍ້ມູນກ່ຽວກັບວິທີການຕິດຕໍ່ກັບຫ້ອງການຂອງສູນດູແລເລື້ອງຮ້ອງທຸກດ້ານການເບິ່ງແຍງລະຍະຍາວຄວນຖືກລວມໄວ້ໃນແຈ້ງການເລື້ອງການປ່ຽນແປງຄ່າທຳນຽມຜູ້ໃຫ້ບໍລິການ ແລະໃນແຈ້ງການທີ່ຜູ້ໃຫ້ບໍລິການເບິ່ງແຍງລະຍະສຸດທ້າຍເລີ້ມສົ່ງຕໍ່ ຫຼື ຍຸດຕິການບໍລິການຕ່າງໆ.